# July Notice: Medicaid Eligibility Changes Impacting Non-Citizens (Laotian)

### Text Message:

ນີ້ແມ່ນຂໍ້ຄວາມຈາກ RI Medicaid. ກົດລະບຽບໃໝ່ຂອງລັດຖະບານກາງຈະຢຸດຕິການໃຫ້ສິດປະກັນສຸຂະພາບ Medicaidແກ່ບາງຄົນທີ່ບໍ່ແມ່ນພົນລະເມືອງສະຫະລັດ ໃນວັນທີ 1 ຕຸລານີ້. ຖ້າຫາກວ່າ ການປ່ຽນແປງນີ້ສົ່ງຜົນກະທົບຕໍ່ Medicaid ຂອງທ່ານ, ລັດ RI ຈະສົ່ງຈົດໝາຍຫາທ່ານເພື່ອຂໍຂໍ້ມູນເພີ່ມເຕີມ. ກະລຸນາເປີດ ແລະ ຕອບຈົດໝາຍທຸກສະບັບທີ່ທ່ານໄດ້ຮັບໂດຍທັນທີ. ສໍາລັບລາຍລະອຽດເພີ່ມເຕີມ, ກະລຸນາເຂົ້າສູ່ລະບົບບັນຊີຂອງທ່ານທີ່ healthyrhode.ri.gov ຫຼື ເຂົ້າເບິ່ງທີ່ staycovered.ri.gov/updates

### Snail mail and email:

ການປ່ຽນແປງການມີສິດໄດ້ຮັບ MEDICAID ໂດຍອີງຕາມສະຖານະການເຂົ້າເມືອງ ກະລຸນາອ່ານ

ເຖິງ ຜູ້ໄດ້ຮັບ Medicaid,

ກົດໝາຍໃໝ່ຂອງລັດຖະບານກາງຈະຢຸດຕິການໃຫ້ສິດປະກັນສຸຂະພາບ Medicaidແກ່ບາງຄົນທີ່ບໍ່ແມ່ນພົນລະເມືອງສະຫະລັດ. ນັບຕັ້ງແຕ່ວັນທີ 1 ຕຸລາ 2026 ເປັນຕົ້ນໄປ, ສະເພາະກຸ່ມຄົນທີ່ບໍ່ແມ່ນພົນລະເມືອງດັ່ງຕໍ່ໄປນີ້ເທົ່ານັ້ນ ຈຶ່ງຈະມີສິດໄດ້ຮັບ Medicaid:

- ຜູ້ຢູ່ອາໄສຖາວອນຢ່າງຖືກຕ້ອງຕາມກົດໝາຍ (ຫຼັງຈາກໄລຍະເວລາລໍຖ້າຫ້າປີ, ຖ້າຫາກວ່າມີ)
- ຜູ້ເຂົ້າເມືອງຊາວຄິວບາ/ເຮຕິ
- ຜູ້ອົບພະຍົບຕາມຂໍ້ຕົກລົງ COFA (ບຸກຄົນມາຈາກໄມໂຄຣນີເຊຍ, ໝູ່ເກາະມາແຊລ ແລະ ປາເລົາ); ແລະ
- ເດັກນ້ອຍ ແລະ ຜູ້ຖືພາ.

ຖ້າຫາກວ່າ ທ່ານບໍ່ແມ່ນພົນລະເມືອງ ຫຼື ຜູ້ມີສັນຊາດສະຫະລັດ ແລະ ບໍ່ໄດ້ຈັດຢູ່ໃນກຸ່ມໃດໜຶ່ງເຫຼົ່ານີ້, ການຄຸ້ມຄອງ Medicaid ຂອງທ່ານຈະສິ້ນສຸດລົງ ເມື່ອກົດລະບຽບໃໝ່ຂອງລັດຖະບານກາງມີຜົນບັງຄັບໃຊ້ ໃນວັນທີ 1 ຕຸລາ 2026. ຖ້າຫາກວ່າ ສະຖານະການເຂົ້າເມືອງຂອງທ່ານມີການປ່ຽນແປງເມື່ອບໍ່ດົນມານີ້, ກະລຸນາ ອັບເດດຂໍ້ມູນບັນຊີ Medicaid ຂອງທ່ານ ໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອໃຫ້ທ່ານສາມາດສືບຕໍ່ໄດ້ຮັບການຄຸ້ມຄອງ.

### ຂ້າພະເຈົ້າຈະອັບເດດບັນຊີ Medicaid ຂອງຂ້າພະເຈົ້າໄດ້ແນວໃດ?

ພໍທັລລູກຄ້າ ແລະ ແອັບມືຖື HealthyRhode ແມ່ນຊ່ອງທາງທີ່ໄວທີ່ສຸດໃນການສົ່ງເອກະສານ ແລະ ອັບເດດບັນຊີຂອງທ່ານ ທ່ານສາມາດເຂົ້າສູ່ລະບົບບັນຊີຂອງທ່ານໄດ້ ໂດຍການເຂົ້າໄປເບິ່ງທີ່ healthyrhode.ri.gov ຫຼື ດາວໂຫຼດແອັບມືຖື HealthyRhode.

ນອກຈາກນີ້ ທ່ານຍັງສາມາດສົ່ງເອກະສານເພື່ອອັບເດດບັນຊີຂອງທ່ານໄດ້ ໂດຍການເຂົ້າໄປສູນສະແກນເອກະສານ ຫຼື ຕູ້ຮັບເອກະສານຂອງ DHS ຫຼື ໄປທີ່ສໍານັກງານ DHS ດ້ວຍຕົນເອງ. ສໍາລັບລາຍຊື່ສະຖານທີ່ທັງໝົດ, ກະລຸນາເຂົ້າໄປເບິ່ງທີ່ dhs.ri.gov/about-us/dhs-offices. ນອກຈາກນີ້ ທ່ານຍັງສາມາດສົ່ງເອກະສານທາງໄປສະນີໄປທີ່ STATE OF RHODE ISLAND P.O. BOX 8709 CRANSTON, RI 02920-8787

### ຈະມີຫຍັງເກີດຂຶ້ນຕໍ່ໄປ?

ທາງລັດຈະແຈ້ງໃຫ້ທ່ານຊາບສະເໝີ ກ່ອນທີ່ຈະເຮັດການປ່ຽນແປງໃດໆກ່ຽວກັບ Medicaid ຂອງທ່ານ. ຖ້າຫາກວ່າ ກົດໝາຍລັດຖະບານກາງສະບັບໃໝ່ນີ້ມີຜົນບັງຄັບໃຊ້ກັບທ່ານ, ທ່ານຈະໄດ້ຮັບໜັງສືແຈ້ງການຈາກລັດໂຣດໄອແລນ ເພື່ອຂໍເອກະສານເພີ່ມເຕີມ. ທ່ານຈະໄດ້ຮັບສໍາເນົາຂອງໜັງສືແຈ້ງການສະບັບນີ້ໃນບັນຊີ HealthyRhode ຂອງທ່ານ ໃນເດືອນສິງຫາ. ຖ້າຫາກວ່າທ່ານໄດ້ລົງທະບຽນເພື່ອຮັບໜັງສືແຈ້ງການເປັນເອກະສານ, ທ່ານກໍຈະໄດ້ຮັບສໍາເນົາທາງໄປສະນີເຊັ່ນກັນ. ກະລຸນາເປີດ ແລະ ຕອບໜັງສືແຈ້ງການທຸກສະບັບທີ່ທ່ານໄດ້ຮັບຈາກລັດໂຣດໄອແລນໂດຍທັນທີ.

ຖ້າຫາກວ່າ ທ່ານ

BE READY.
STAY COVERED.

ບໍ່ມີສິດໄດ້ຮັບ Medicaid ອີກຕໍ່ໄປແລ້ວ, ໜັງສືແຈ້ງການຂອງທ່ານຈະລະບຸຂໍ້ມູນກ່ຽວກັບວິທີອື່ນໆ ເພື່ອເຂົ້າເຖິງການບໍລິການດູແລສຸຂະພາບ. ນອກຈາກນີ້, ໜັງສືແຈ້ງການດັ່ງກ່າວຈະແຈ້ງໃຫ້ທ່ານຊາບກ່ຽວກັບວິທີການຍື່ນອຸທອນ ຖ້າຫາກວ່າທ່ານບໍ່ເຫັນດີກັບການຕັດສິນໃຈໃດໆຂອງທາງລັດກ່ຽວກັບການຄຸ້ມຄອງ Medicaid ຂອງທ່ານ.

## ຂ້າພະເຈົ້າຈະກວດສອບໃບສະໝັກຂໍການເຂົ້າເມືອງຂອງຂ້າພະເຈົ້າໄດ້ແນວໃດ?

ຖ້າຫາກວ່າ ທ່ານມີໃບສະໝັກ, ຄໍາຮ້ອງ ຫຼື ຄໍາຮ້ອງຂໍກ່ຽວກັບການເຂົ້າເມືອງ ທີ່ຍັງຢູ່ໃນຂັ້ນຕອນການພິຈາລະນາໂດຍສໍານັກງານກວດຄົນເຂົ້າເມືອງ ແລະ ສັນຊາດສະຫະລັດ (United States Citizenship and Immigration Services, USCIS), ທ່ານສາມາດກວດສອບສະຖານະຜ່ານທາງອອນລາຍໄດ້ທີ່ egov.uscis.gov. ທ່ານຈະຕ້ອງໃຊ້ເລກໃບຢືນຢັນການຮັບ 13 ຕົວເລກ (ເຊິ່ງຢູ່ໃນແບບຟອມ I-797 ຫຼື I-797C).

ຖ້າຫາກວ່າ ທ່ານມີຄໍາຖາມ ຫຼື ຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບການປ່ຽນແປງນີ້, ກະລຸນາເຂົ້າໄປເບິ່ງທີ່ staycovered.ri.gov/Medicaid-updates.

BE READY.
STAY COVERED.